ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 545 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 24 JUL 2014

ສຳນັກງານ ຫລຕ
ເລກທີ 536
ວັນທີ 24/7/2014
ໂທລະສັບ 021 217770

# ຂໍ້ຕົກລົງ

## ວ່າດ້ວຍ ນະໂຍບາຍເບັ້ຍປະຊຸມ

## ຂອງກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ

- ອີງຕາມມກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍ ຫຼັກຊັບ ສະບັບເລກທີ 21/ສພຊ ລົງວັນທີ 10 ທັນວາ 2012;
- ອີງຕາມການຄົ້ນຄວ້າ ນຳສະເໜີຂອງກົມຈັດຕັ້ງແລະພະນັກງານ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດເບັ້ຍປະຊຸມຂອງກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນປັດຈຸບັນ.

**ມາດຕາ 2. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ສຳລັບຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງທີ່ໄດ້ກະກຽມກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມຂອງຄະນະກາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 3. ການກຳນົດເບັ້ຍປະຊຸມ**

ເບັ້ຍປະຊຸມປະຕິບັດ ດັ່ງນີ້:

1. ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ **2.000.000** ກີບ/ຄົນ/ຄັ້ງ;
2. ຮອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ **1.700.000** ກີບ/ຄົນ/ຄັ້ງ;
3. ຄະນະກຳມະການຄຸ້ມຄອງຫຼັກຊັບ **1.500.000** ກີບ/ຄົນ/ຄັ້ງ;

4. ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມ ແລະ
   ພະນັກງານຂັ້ນກົມຂອງສໍານັກງານ ຄຄຊ — **500.000** ກີບ/ຄົນ/ຄັ້ງ;
5. ເລຂາການນໍາ, ຄະນະພະແນກຂອງສໍານັກງານ ຄຄຊ
   ແລະ ຄະນະພະແນກຂອງພາກສ່ວນອື່ນທີ່ເຂົ້າຮ່ວມ — **300.000** ກີບ/ຄົນ/ຄັ້ງ;
6. ພະນັກງານຊ່ວຍວຽກ, ໃກ້ຊິດການນໍາ, ຂັບລົດ
   ແລະ ນັກຂ່າວ — **150.000** ກີບ/ຄົນ/ຄັ້ງ.

**ມາດຕາ 4. ການຈັດຕັ້ງປະຕິບັດ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ຫ້ອງການທະນາຄານແຫ່ງ ສປປ ລາວ, ກົມຈັດຕັ້ງ ແລະພະນັກງານ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວ.

**ມາດຕາ 5. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

**ດຣ. ສົມພາວ ໄຟສິດ**

ສະ: ອານົງຄາ ທິມອາ

*100 600,000 ກີບ C. ບິນນຸວັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 818 /ທຫລ.

ນະຄອນຫຼວງວຽງຈັນ, ວັນທີ 18 SEP 2013

# ຂໍ້ຕົກລົງ

## ວ່າດ້ວຍນະໂຍບາຍການກະກຽມ ແລະ ການເຂົ້າຮ່ວມກອງປະຊຸມ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມຂໍ້ຕົກລົງ ວ່າດ້ວຍກຳນົດໝາຍການນຳໃຊ້ງົບປະມານບໍລິຫານຂອງລັດ ເລກທີ 0008/ກງ ລົງວັນທີ 5/1/ 2010;
- ອີງຕາມບົດບັນທຶກກອງປະຊຸມຂອງຄະນະປະຈຳພັກ-ຄະນະຜູ້ອຳນວຍການທະນາຄານແຫ່ງ ສປປ ລາວ ເລກທີ 08/ຄປພ.ທຫລ ລົງວັນທີ 19/8/2013.

ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຕົກລົງ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກ ເພື່ອກຳນົດຫຼັກການ, ລະບຽບການ, ການກຳນົດຄ່າໃຊ້ຈ່າຍ ແລະ ການປະຕິບັດນະໂຍບາຍໃນການກະກຽມ ແລະ ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມຕ່າງໆ, ຄຳບັນຍາຍ, ປາຖະກະຖາ ຫຼື ເຜີຍແຜ່ເອກະສານຕ່າງໆ ເພື່ອໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດນະໂຍບາຍຕ່າງໆ ແລະ ໃຫ້ສອດຄ່ອງກັບສະພາບເສດຖະກິດ-ສັງຄົມໃນປັດຈຸບັນ.

**ມາດຕາ 2. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ສຳລັບພະນັກງານຂອງທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ກະກຽມກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 3. ອະທິບາຍຄຳສັບ**

1. ຄ່າໃຊ້ຈ່າຍ: ໝາຍເຖິງລາຍຈ່າຍຕ່າງໆສຳລັບການກະກຽມ ແລະ ການຮັບໃຊ້ໃນການຈັດກອງປະຊຸມ;



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

2. **ກອງປະຊຸມ:** ໝາຍເຖິງກອງປະຊຸມສະພາບໍລິຫານ ທຫລ, ກອງປະຊຸມໃຫຍ່ອົງຄະນະພັກ ທຫລ, ກອງປະຊຸມເປີດກວ້າງຄະນະພັກ ທຫລ, ກອງປະຊຸມວຽກງານທະນາຄານ, ກອງປະຊຸມຄົ້ນຄວ້າປຶກສາຫາລືຂັ້ນຕ່າງໆ, ສໍາມະນາ, ຝຶກອົບຮົມ, ປາຖະກະຖາ ແລະ ກອງປະຊຸມເຜີຍແຜ່ເອກະສານຕ່າງໆ;

3. **ເບັ້ຍປະຊຸມ:** ໝາຍເຖິງຈໍານວນເງິນທີ່ຈ່າຍໃຫ້ຜູ້ເຂົ້າຮ່ວມກອງປະຊຸມ;

4. **ຄ່າແຮງງານ:** ໝາຍເຖິງຄ່າຕອບແທນ ຊຶ່ງທຽບມູນຄ່າເປັນເງິນ ໃຫ້ແກ່ຄະນະຮັບຜິດຊອບ ຫຼື ພະນັກງານຊ່ວຍວຽກ ໃນການຈັດກອງປະຊຸມຂອງທະນາຄານແຫ່ງ ສປປ ລາວ;

5. **ຄ່າບັນຍາຍ:** ໝາຍເຖິງຄ່າແຮງງານ ສໍາລັບຜູ້ບັນຍາຍເອກະສານຕ່າງໆ ເຊັ່ນ: ສໍາມະນາ, ຝຶກອົບຮົມ, ປາຖະກະຖາ ຫຼື ເຜີຍແຜ່ວຽກງານຕ່າງໆ;

6. **ຄ່າແປພາສາ:** ໝາຍເຖິງຄ່າແຮງງານ ສໍາລັບຜູ້ແປພາສາ ທາງປາກເປົ່າ ຫຼື ທາງເອກະສານ ເພື່ອຮັບໃຊ້ກອງປະຊຸມຂອງທະນາຄານແຫ່ງ ສປປ ລາວ.

## ໝວດທີ II
## ການກໍານົດເບັ້ຍປະຊຸມ

### ມາດຕາ 4. ກອງປະຊຸມສະພາບໍລິຫານ ທຫລ

ເບັ້ຍປະຊຸມ ຂອງກອງປະຊຸມສະພາບໍລິຫານ ທຫລ ໃຫ້ປະຕິບັດດັ່ງນີ້:

1. ປະທານສະພາບໍລິຫານ ທຫລ 4,500,000 ກີບ/ຄົນ/ຄັ້ງ;
2. ຮອງປະທານສະພາບໍລິຫານ ທຫລ 4,000,000 ກີບ/ຄົນ/ຄັ້ງ;
3. ສະມາຊິກສະພາບໍລິຫານ ທຫລ ແລະ ຮອງຜູ້ວ່າການ ທຫລ 3,500,000 ກີບ/ຄົນ/ຄັ້ງ;
4. ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມ 2,500,000 ກີບ/ຄົນ/ຄັ້ງ.

### ມາດຕາ 5. ກອງປະຊຸມໃຫຍ່ອົງຄະນະພັກ ທຫລ

ເບັ້ຍປະຊຸມ ຂອງກອງປະຊຸມໃຫຍ່ອົງຄະນະພັກ ທະນາຄານແຫ່ງ ສປປ ລາວ ແມ່ນໃຫ້ປະຕິບັດຕາມການຕົກລົງເຫັນດີ ຂອງຄະນະພັກ ແລະ ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

### ມາດຕາ 6. ກອງປະຊຸມເປີດກວ້າງຄະນະພັກ ທຫລ

ເບັ້ຍປະຊຸມ ຂອງກອງປະຊຸມເປີດກວ້າງຄະນະພັກໃຫ້ປະຕິບັດດັ່ງນີ້:

1. ຄະນະປະທານ 600,000 ກີບ/ຄົນ/ວັນ;
2. ກອງເລຂາ 400,000 ກີບ/ຄົນ/ວັນ;
3. ຜູ້ແທນເຂົ້າຮ່ວມກອງປະຊຸມ 350,000 ກີບ/ຄົນ/ວັນ.

### ມາດຕາ 7. ກອງປະຊຸມວຽກງານທະນາຄານ

ກອງປະຊຸມວຽກງານທະນາຄານ: ໝາຍເຖິງກອງປະຊຸມວຽກງານກອດກາ, ກອງປະຊຸມວຽກງານຈັດຕັ້ງ ແລະ ກອງປະຊຸມວຽກງານທະນາຄານທົ່ວປະເທດ ໃຫ້ປະຕິບັດອັດຕາເບັ້ຍປະຊຸມ ດັ່ງນີ້:

1. ຜູ້ວ່າການ ແລະ ຮອງຜູ້ວ່າການ 600,000 ກີບ/ຄົນ/ວັນ;
2. ຄະນະພັກ ທຫລ ແລະ ຜູ້ຊ່ວຍຜູ້ວ່າການ 500,000 ກີບ/ຄົນ/ວັນ;

3. ຄະນະກົມ ແລະ ທຽບເທົ່າ 400,000 ກີບ/ຄົນ/ວັນ;

4. ຄະນະພະແນກ ແລະ ທຽບເທົ່າ 350,000 ກີບ/ຄົນ/ວັນ;

5. ວິຊາການ 300,000 ກີບ/ຄົນ/ວັນ.

ນັກຂ່າວ ທີ່ມາເກັບກຳຂ່າວໃນກອງປະຊຸມ ແຕ່ມາດຕາ 4 ຫາ ມາດຕາ 7 ແມ່ນຈະໄດ້ຮັບ 200,000 ກີບ/ສຳນັກຂ່າວ/ວັນ; ສຳລັບຄົນຂັບລົດ ແລະ ຕຳຫຼວດໃກ້ສິດ ແມ່ນຈະໄດ້ຮັບ 100,000 ກີບ/ຄົນ/ວັນ.

**ມາດຕາ 8. ກອງປະຊຸມຄົ້ນຄວ້າຮ່າງ ຫຼື ປັບປຸງນິຕິກຳ**

ເບັ້ຍປະຊຸມຂອງກອງປະຊຸມຄົ້ນຄວ້າຮ່າງ ຫຼື ປັບປຸງນິຕິກຳ ແຕ່ຂັ້ນຄຳລັດຂຶ້ນໄປໃຫ້ປະຕິບັດດັ່ງນີ້:

1. ລັດຖະມົນຕີຊ່ວຍ ແລະ ທຽບເທົ່າຂຶ້ນໄປ 300,000 ກີບ/ຄົນ/ວັນ;
2. ຄະນະປະຈຳພັກ ທຫລ, ຄະນະພັກ ທຫລ ແລະ ຜູ້ຊ່ວຍຜູ້ວ່າການ 250,000 ກີບ/ຄົນ/ວັນ;
3. ຄະນະກົມ ແລະ ທຽບເທົ່າ 200,000 ກີບ/ຄົນ/ວັນ;
4. ຄະນະພະແນກ ແລະ ທຽບເທົ່າພະແນກ 150,000 ກີບ/ຄົນ/ວັນ;
5. ວິຊາການ 100,000 ກີບ/ຄົນ/ວັນ.

ສຳລັບຄະນະຮັບຜິດຊອບໃນການຄົ້ນຄວ້າຮ່າງ ຫຼື ປັບປຸງນິຕິກຳ ແມ່ນໃຫ້ປະຕິບັດຕາມມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 9. ກອງປະຊຸມປຶກສາຫາລື, ສຳມະນາ ແລະ ຝຶກອົບຮົມ**

ເບັ້ຍປະຊຸມຂອງກອງປະຊຸມປຶກສາຫາລື, ສຳມະນາ ແລະ ຝຶກອົບຮົມ ໃຫ້ປະຕິບັດດັ່ງນີ້:

- ກອງປະຊຸມປຶກສາຫາລື ນັບແຕ່ 2 ວັນຂຶ້ນໄປ ທີ່ມີຫຼາຍກົມ ຫຼື ຫຼາຍພາກສ່ວນເຂົ້າຮ່ວມ ນັບແຕ່ 5 ພາກສ່ວນຂຶ້ນໄປ ແມ່ນຈະໄດ້ຮັບເບັ້ຍປະຊຸມ 100,000 ກີບ/ຄົນ/ວັນ;
- ກອງປະຊຸມສຳມະນາ ແລະ ຝຶກອົບຮົມ ທີ່ມີຫຼາຍກົມ ຫຼື ຫຼາຍພາກສ່ວນເຂົ້າຮ່ວມ ນັບແຕ່ 5 ພາກສ່ວນຂຶ້ນໄປ ແມ່ນຈະໄດ້ຮັບເບັ້ຍປະຊຸມ 50,000 ກີບ/ຄົນ/ວັນ;.

~~ກອງປະຊຸມປາຖະກະຖາ ແລະ ກອງປະຊຸມເຊື່ອມຊຶມມະຕິຕ່າງໆ ແມ່ນຈະບໍ່ໄດ້ຮັບເບັ້ຍປະຊຸມ~~ ເຊັ່ນ: ວັນຊາດ, ວັນສ້າງຕັ້ງພັກ, ວັນກຳມະກອນສາກົນ ຫຼື ເຜີຍແຜ່ເອກະສານຕ່າງໆ; ຍົກເວັ້ນກໍລະນີທີ່ໄດ້ຮັບການເຫັນດີຈາກຄະນະຜູ້ວ່າການ ເປັນອັນສະເພາະ.

ກອງປະຊຸມດັ່ງກ່າວ ຕ້ອງເປັນກອງປະຊຸມທີ່ຈັດຂຶ້ນໂດຍທະນາຄານແຫ່ງ ສປປ ລາວ ເທົ່ານັ້ນ ຈຶ່ງໄດ້ຮັບເບັ້ຍປະຊຸມ.

## ໝວດທີ III
## ນະໂຍບາຍຄ່າແຮງງານ

**ມາດຕາ 10. ນະໂຍບາຍຄ່າແຮງງານໃນການກະກຽມຈັດກອງປະຊຸມ**

ຄະນະຮັບຜິດຊອບ ແລະ ພະນັກງານຊ່ວຍວຽກໃນການກະກຽມຈັດກອງປະຊຸມຕ່າງໆ ທີ່ໄດ້ຮັບການເຫັນດີຈາກຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໃຫ້ປະຕິບັດດັ່ງນີ້:

1. ຄະນະກະກຽມເນື້ອໃນກອງປະຊຸມ ແມ່ນຈະໄດ້ຮັບ 60,000 ກີບ/ຄົນ/ໜ້າເຈ້ຍພິມ ແລະ ແຕ່ສູງສຸດບໍ່ໃຫ້ເກີນ 50 ໜ້າເຈ້ຍພິມ/ຄົນ;

2. ຄະນະພິທີການກະກຽມຈັດກອງປະຊຸມ ເຊັ່ນ: ຈັດສະຖານທີ່, ແຈກຢາຍເອກະສານ, ລົງທະບຽນ ແລະ ອື່ນໆ ແມ່ນຈະໄດ້ຮັບ 50,000 ກີບ/ຄົນ/ວັນ;

3. ຄະນະປ້ອງກັນກອງປະຊຸມ ແມ່ນຈະໄດ້ຮັບ 40,000 ກີບ/ຄົນ/ວັນ.

ການຄິດໄລ່ຄ່າແຮງງານໃນການກະກຽມຈັດກອງປະຊຸມ ໃຫ້ປະຕິບັດ ຄື:

- ກອງປະຊຸມສະພາບໍລິຫານ ທທລ, ກອງປະຊຸມໃຫຍ່ອົງຄະນະພັກ ທທລ, ກອງປະຊຸມເປີດກວ້າງຄະນະພັກ ທທລ ແລະ ກອງປະຊຸມວຽກງານທະນາຄານ ທີ່ມີໄລຍະດຳເນີນ 1 ວັນ ໃຫ້ຄິດໄລ່ເທົ່າກັບ 5 ວັນ ແຕ່ສູງສຸດບໍ່ເກີນ 30 ວັນ;

- ກອງປະຊຸມຄົ້ນຄວ້າປຶກສາຫາລືຂັ້ນຕ່າງໆ, ສຳມະນາ, ຝຶກອົບຮົມ, ປາຖະກະຖາ ແລະ ກອງປະຊຸມເຜີຍແຜ່ເອກະສານຕ່າງໆ ທີ່ມີໄລຍະດຳເນີນແຕ່ 1 ວັນ ໃຫ້ຄິດໄລ່ເທົ່າກັບ 3 ວັນ ແຕ່ສູງສຸດບໍ່ໃຫ້ເກີນ 30 ວັນ.

**ມາດຕາ 11. ນະໂຍບາຍຄ່າແຮງງານໃນການກະກຽມວຽກງານສະເພາະກິດ :**

ຄະນະຮັບຜິດຊອບກະກຽມວຽກງານສະເພາະກິດ ທີ່ໄດ້ຮັບການແຕ່ງຕັ້ງ ຈາກຜູ້ວ່າການທະນາຄານແຫ່ງ ສປປ ລາວ ແມ່ນຈະໄດ້ຮັບອັດຕາກິນ 40,000 ກີບ/ຄົນ/ວັນ. ໃນກໍລະນີວຽກງານສະເພາະກິດນັ້ນ ຫາກມີກຳນົດເວລາເກີນ 1 ເດືອນຂຶ້ນໄປ ແມ່ນໃຫ້ຄິດໄລ່ຕາມໄລຍະເວລາດັ່ງນີ້:

1. ແຕ່ 1 -3 ເດືອນ ໃຫ້ຄິດໄລ່ເທົ່າກັບ 30 ວັນ;
2. ແຕ່ 4-6 ເດືອນ ໃຫ້ຄິດໄລ່ເທົ່າກັບ 60 ວັນ;
3. ແຕ່ 7 ເດືອນຂຶ້ນໄປ ໃຫ້ຄິດໄລ່ເທົ່າກັບ 90 ວັນ.

**ມາດຕາ 12. ນະໂຍບາຍຄ່າບັນຍາຍ**

ນະໂຍບາຍຄ່າບັນຍາຍໃຫ້ປະຕິບັດດັ່ງນີ້:

1. ປະທານປະເທດ, ປະທານສະພາແຫ່ງຊາດ ແລະ ນາຍົກລັດຖະມົນຕີ 2,500,000 ກີບ/ຄົນ/ວັນ;
2. ຮອງປະທານປະເທດ, ຮອງປະທານສະພາແຫ່ງຊາດ ແລະ ຮອງນາຍົກລັດຖະມົນຕີ 2,000,000 ກີບ/ຄົນ/ວັນ;
3. ລັດຖະມົນຕີວ່າການ, ເຈົ້າແຂວງ, ເຈົ້າຄອງນະຄອນ, ລັດຖະມົນຕີຊ່ວຍວ່າການ, ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ, ທຽບເທົ່າ ແລະ ສາດສະດາຈານ 1,500,000 ກີບ/ຄົນ/ວັນ;
4. ຄະນະປະຈຳພັກ, ຄະນະພັກ ທທລ ແລະ ຜູ້ຊ່ວຍຜູ້ວ່າການ ທທລ 1,000,000 ກີບ/ຄົນ/ວັນ;
5. ຄະນະກົມ ແລະ ທຽບເທົ່າ 800,000 ກີບ/ຄົນ/ວັນ;
6. ຄະນະພະແນກ ແລະ ທຽບເທົ່າ 700,000 ກີບ/ຄົນ/ວັນ;
7. ວິຊາການ 500,000 ກີບ/ຄົນ/ວັນ.

ສຳລັບການບັນຍາຍ ໃນຂັ້ນກົມລົງມານັ້ນ, ຕ້ອງມີຫຼາຍກົມ ຫຼື ຫຼາຍພາກສ່ວນເຂົ້າຮ່ວມ ນັບແຕ່ 5 ພາກສ່ວນຂຶ້ນໄປ ຈຶ່ງໃຫ້ຄິດໄລ່ຄ່າບັນຍາຍໃຫ້ຜູ້ບັນຍາຍ; ຍົກເວັ້ນກໍລະນີທີ່ໄດ້ຮັບການເຫັນດີ ຈາກຄະນະຜູ້ວ່າການເປັນອັນສະເພາະ.

**ມາດຕາ 13. ນະໂຍບາຍຄ່າແປພາສາເພື່ອຮັບໃຊ້ກອງປະຊຸມ**

ຄ່າແປພາສາ ເພື່ອຮັບໃຊ້ກອງປະຊຸມຂອງທະນາຄານແຫ່ງ ສປປ ລາວ ໃຫ້ປະຕິບັດດັ່ງນີ້:

1. ແປເອກະສານ ພາສາລາວມາເປັນພາສາຕ່າງປະເທດ 80,000 ກີບ/ໜ້າເຈ້ຍພິມ;
2. ແປເອກະສານ ພາສາຕ່າງປະເທດມາເປັນພາສາລາວ 70,000 ກີບ/ໜ້າເຈ້ຍພິມ;
3. ແປພາສາປາກເປົ່າ 120,000 ກີບ/ຊົ່ວໂມງ;
4. ໃນກໍລະນີທີ່ຈ້າງບຸກຄົນມາຈາກພາຍນອກ ແປເອກະສານ ພາສາລາວເປັນພາສາຕ່າງປະເທດ ແລະ ພາສາຕ່າງປະເປັນພາສາລາວ ແມ່ນປະຕິບັດຕາມ ຂໍ້ 1 ແລະ 2, ແຕ່ຖ້າແປພາສາປາກເປົ່າ ແມ່ນໃຫ້ປະຕິບັດ 700,000 ກີບ/ວັນ.

## ໝວດທີ IV
## ບົດບັນຍັດສຸດທ້າຍ

**ມາດຕາ 14. ການຈັດຕັ້ງປະຕິບັດ**

ຫ້ອງການ, ກົມຈັດຕັ້ງແລະພະນັກງານ, ບັນດາກົມ ແລະ ທຽບເທົ່າກົມຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງຕົນ.

**ມາດຕາ 15. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ ທຸກຂໍ້ກຳນົດ, ລະບຽບ ແລະ ຄຳສັ່ງ ຂອງ ທຫລ ທີ່ໃຊ້ໃນເມື່ອກ່ອນ ຖ້າຂັດກັບຂໍ້ຕົກລົງສະບັບນີ້ ລ້ອນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ ຜູ້ວ່າການ

ດຣ. ສົມພາວ ໄຜສິດ